**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເລກທີ: 12 /ສພບ

ນະຄອນຫຼວງວຽງຈັນ, ວັນທີ: 29/05/2020

# ມະຕິ

## ກອງປະຊຸມສາມັນຜູ້ຖືຮຸ້ນ ທຄຕລ ປະຈຳປີ 2019.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ໄດ້ຈັດກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2019 (ຕໍ່ໄປນີ້ຮຽກວ່າ: "ກອງປະຊຸມ") ຂຶ້ນໃນເວລາ 14:30 ໂມງ ຫາ 16:00 ໂມງ ຂອງວັນທີ 29 ພຶດສະພາ 2020 ທີ່ຫ້ອງປະຊຸມ Grand Ballroom ໂຮງແຮມແລນມາກແມ່ຂອງຣິເວີໄຊ, ນະຄອນຫຼວງວຽງຈັນ, ໂດຍການເປັນປະທານຂອງ ທ່ານ ປອ. ບຸນເຫຼືອ ສິນໄຊວໍຣະວົງ, ຮອງລັດຖະມົນຕີກະຊວງການເງິນ, ປະທານສະພາບໍລິຫານ ທຄຕລ ພ້ອມດ້ວຍສະມາຊິກສະພາບໍລິຫານ ທຄຕລ, ມີຜູ້ຖືຮຸ້ນເຂົ້າຮ່ວມດ້ວຍຕົນເອງຈຳນວນ 62 ທ່ານ, ຜູ້ມອບສິດຈຳນວນ 234 ທ່ານ ຊຶ່ງລວມຈຳນວນຮຸ້ນທັງໝົດທີ່ເຂົ້າຮ່ວມກອງປະຊຸມເທົ່າກັບ 171.437.346 ຮຸ້ນ, ນັບທັງ 5.597.955 ຮຸ້ນ ທີ່ຖືກມອບສິດ, ບັນລຸອັດຕາສ່ວນ 82,532% ຂອງຈຳນວນຮຸ້ນ ທຄຕລ ທັງໝົດ ແລະ ຖືວ່າຄົບອົງປະຊຸມ ເພື່ອໃຫ້ສາມາດດຳເນີນກອງປະຊຸມໄດ້ຕາມກົດລະບຽບຂອງ ທຄຕລ ແລະ ກົດໝາຍທີ່ກ່ຽວຂ້ອງ. ສຳລັບຮຸ້ນທີ່ບໍ່ໄດ້ເຂົ້າຮ່ວມກອງປະຊຸມ ມີຈຳນວນ 36.285.954 ຮຸ້ນ ເທົ່າກັບ 17,468% ຂອງຈຳນວນຮຸ້ນ ທຄຕລ ທັງໝົດ.

**ກອງປະຊຸມ ໄດ້ພິຈາລະນາ ແລະ ມີມະຕິດັ່ງນີ້:**

**ວາລະທີ 1: ຮັບຮອງບົດບັນທຶກຂອງກອງປະຊຸມຜູ້ຖືຮຸ້ນຄັ້ງຜ່ານມາ.**

ກອງປະຊຸມ ໄດ້ມີມະຕິດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈຳນວນ: 171.437.346 ສຽງ, ເທົ່າກັບ **100%** ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ: 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

**ວາລະທີ 2: ຮັບຊາບການລາຍງານການເຄື່ອນໄຫວດຳເນີນງານຂອງ ທຄຕລ ປະຈຳປີ 2019 ໂດຍຫຍໍ້.**

**ວາລະທີ 3: ຮັບຮອງເອົາຜົນການດຳເນີນທຸລະກິດປະຈຳປີ 2019:**

ຜົນການດຳເນີນທຸລະກິດປະຈຳປີ 2019 ມາດຖານສາກົນສະເພາະກິດຈະການ ທີ່ໄດ້ຮັບການກວດສອບຈາກ ບໍລິສັດເອີນແອນຢັ່ງລາວຈຳກັດ ມີດັ່ງນີ້:

- ຍອດຊັບສິນ/ໜີ້ສິນ: 46.547.208 ລ້ານກີບ,
- ຍອດສິນເຊື່ອທັງໝົດ: 26.987.990 ລ້ານກີບ,

- ຍອດເງິນຝາກທັງໝົດ: 40.004.656 ລ້ານກີບ,
- ກຳໄລກ່ອນອາກອນ: 430.486 ລ້ານກີບ,
- ກຳໄລຫຼັງອາກອນ: 329.482 ລ້ານກີບ.

ກອງປະຊຸມ ມອບສິດໃຫ້ສະພາບໍລິຫານ ທຄຕລ ພິຈາລະນາຮັບຮອງຜົນການດຳເນີນທຸລະກິດປະຈຳປີ 2019 ມາດຖານສາກົນແບບສັງລວມກິດຈະການ ຫຼັງສຳເລັດການກວດສອບ.

ກອງປະຊຸມ ໄດ້ມີມະຕິດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈຳນວນ: 171.437.346 ສຽງ, ເທົ່າກັບ **100%** ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ: 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

**ວາລະທີ 4: ຮັບຮອງເງິນປັນຜົນປະຈຳປີ 2019:**

ຫຼັງຈາກຫັກລາຍຈ່າຍອາກອນ ແລະ ສ້າງຄັງຕ່າງໆຕາມລະບຽບການແລ້ວ, ເຫັນດີຈ່າຍເງິນປັນຜົນຈຳນວນທັງໝົດ: 168.879 **ລ້ານກີບ** ໃຫ້ຜູ້ຖືຮຸ້ນ ທຄຕລ ທີ່ມີລາຍຊື່ໃນປຶ້ມບັນຊີຜູ້ຖືຮຸ້ນ ໃນມື້ປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຜູ້ຖືຮຸ້ນໃນການຮັບເງິນປັນຜົນ ແລະ ເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນ ໃນວັນທີ 01 ເມສາ 2020, ໃນອັດຕາ **813 ກີບ/ຮຸ້ນ.** ການຈ່າຍເງິນປັນຜົນໃຫ້ສຳເລັດພາຍໃນ 10 ວັນລັດຖະການຫຼັງຈາກກອງປະຊຸມຄັ້ງນີ້.

ກອງປະຊຸມ ໄດ້ມີມະຕິດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈຳນວນ: 171.437.346 ສຽງ, ເທົ່າກັບ **100%** ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ: 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

**ວາລະທີ 5: ຮັບຮອງເອົາແຜນການປີ 2020:**

- ຍອດຊັບສິນ ເພີ່ມຂຶ້ນ: 7,0%,
- ຍອດເງິນຝາກ ເພີ່ມຂຶ້ນ: 7,7%
- ຍອດເງິນກູ້ທັງໝົດ ເພີ່ມຂຶ້ນ: 5,2%,
- ກຳໄລກ່ອນອາກອນ: 357 ຕື້ກີບ ຫຼຸດລົງ 17,1 %.
- ແຜນຮັບພະນັກງານໃໝ່ ປະກອບໃຫ້ ທຄຕລ ທົ່ວລະບົບ ຈຳນວນ 166 ຄົນ,
- ແຜນການຂະຫຍາຍຕາໜ່າງບໍລິການເພີ່ມຂຶ້ນ 12 ໜ່ວຍບໍລິການ ໃນທົ່ວປະເທດ
- ແຜນການນຳໃຊ້ທຶນເພື່ອປະກອບອັດຖຸເຕັກນິກ, ກໍ່ສ້າງ ແລະ ສ້ອມແປງທັງໝົດ: 360,79 ຕື້ກີບ ແລະ ແຜນຄາດວ່າຈະໂອນເປັນຊັບສິນບັດຖິທີ່ ເປັນຈຳນວນເງິນທັງໝົດ: 312,44 ຕື້ກີບ.

ກອງປະຊຸມ ມອບສິດໃຫ້ສະພາບໍລິຫານ ທຄຕລ ປັບປຸງແຜນການປະຈຳປີ 2020 ຕາມທີ່ສະພາບໍລິຫານເຫັນວ່າເໝາະສົມ ໃນກໍລະນີທີ່ມີການປ່ຽນແປງໃດໆໃນອະນາຄົດ.

ກອງປະຊຸມ ໄດ້ມີມະຕິດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈຳນວນ: 171.437.346 ສຽງ, ເທົ່າກັບ **100%** ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

- ບໍ່ເຫັນດີຈຳນວນ: 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

**ວາລະທີ 6: ຮັບຮອງເອົາຜູ້ກວດສອບອິດສະຫຼະ ປະຈຳປີ 2020:**

ຮັບຮອງເອົາການແຕ່ງຕັ້ງບໍລິສັດ PWC ເປັນຜູ້ກວດສອບອິດສະຫຼະຂອງ ທຄຕລ ປະຈຳປີ 2020, ລາຄາກວດສອບ ແລະ ທົບທວນຂອບເຂດເງິນກູ້ ແມ່ນ 123.750 ໂດລາສະຫະລັດ. ການບໍລິການກວດສອບລວມມີການກວດສອບຕາມມາດຖານສາກົນ ແລະ ມາດຖານລາວ ເປັນພາສາລາວພາສາອັງກິດ, ທົບທວນຖານະການເງິນປະຈຳ 6 ເດືອນ ແລະ ປະຈຳປີ.

ກອງປະຊຸມ ໄດ້ມີມະຕິດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈຳນວນ: 171.437.346 ສຽງ, ເທົ່າກັບ **100%** ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ: 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

**ວາລະທີ 7: ຮັບຮອງການແຕ່ງຕັ້ງສະພາບໍລິຫານຂອງ ທຄຕລ**

ຮັບຮອງເອົາການຕໍ່ອາຍຸການຂອງສະພາບໍລິຫານ ທຄຕລ ຊຸດປະຈຸບັນ ໄປອີກ 1 ປີ ດັ່ງມີລາຍຊື່ລຸ່ມນີ້:

| | | |
|---|---|---|
| 1. | ທ່ານ ປອ. ບຸນເຫຼືອ ສິນໄຊວໍຣະວົງ, | ຮອງລັດຖະມົນຕີກະຊວງການເງິນ |
| 2. | ທ່ານ ຄຳສຸກ ສູນດາລາ | ບຸກຄົນອິດສະຫຼະ |
| 3. | ທ່ານ ພູຂົງ ຈັນທະຈັກ | ຜູ້ອຳນວຍການໃຫຍ່ ທຄຕລ |
| 4. | ທ່ານ ພຸດທະຂັນ ຂັນຕີ, | ຮອງຫົວໜ້າຄັງເງິນແຫ່ງຊາດ |
| 5. | ທ່ານ ຮສ.ປອ ພູເພັດ ກ້ຽວພິລາວົງ | ຮອງຄະນະບໍດີຄະນະເສດຖະສາດແລະບໍລິຫານທຸລະກິດ |
| 6. | ທ່ານ ວຽງສຸກ ຈຸນທະວົງ, | ຮອງຜູ້ອຳນວຍການໃຫຍ່ ທຄຕລ |
| 7. | ທ່ານ Stephane Mangiavacca | ຕາງໜ້າຄູ່ຮ່ວມຍຸດທະສາດ (COFIBRED) |

ກອງປະຊຸມ ໄດ້ມີມະຕິດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈຳນວນ: 171.437.346 ສຽງ, ເທົ່າກັບ **100%** ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ: 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ມະຕິກອງປະຊຸມສະບັບນີ້ ຖືເປັນບ່ອນອີງສຳຄັນ ສຳລັບທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເພື່ອແຈ້ງໃຫ້ຜູ້ຖືຮຸ້ນ, ນັກລົງທຶນ, ພາກສ່ວນທີ່ກ່ຽວຂ້ອງຮັບຊາບ ແລະ ນຳໄປຈັດຕັ້ງປະຕິບັດ.

**ປະທານກອງປະຊຸມ**

**ບຸນເຫຼືອ ສິນໄຊວໍຣະວົງ**